ຄະນະທີມງານຂອງໂຄງການສົ່ງເສີມ ຄຸນນະພາບໃຫ້ດີຂຶ້ນ **RCS LTC** ປະກອບ ດ້ວຍຜູ້ຊ່ຽວຊານທີ່ມີຄວາມຮູ້ໃນພາກປະ ຕິບັດອີງຕາມຫລັກຖານແລະກົດກຳນົດຕາມຣະບຽບການທີ່ກ່ຽວພັນນຳການ ລົ້ມ, ການຄວບຄຸມນຳຢາແລະການປ້ອງ ກັນການອັກເສບແລະຣະບົບການຄວບ ຄຸມ. ນອກຈາກນັ້ນອີກ, ການຢ້ຽມຢາມ ການ ສົ່ງເສີມຄຸນນະພາບ ໃຫ້ດີຂື້ນສຳລັບການ ກວດກາເບິ່ງໃນ ເບື້ອງຕົ້ນຂອງໄດ້ຖືກສະ ເນີໃຫ້ຢູ່ໃນທ້ອງຖິ່ນ 2.




ການບໍຣິການຟຣີອັນນີ້ໄດ້ຖືກເອົາໃຫ້ເຮືອນຄອບຄົວຜູ້ໃຫຍ່,ສະຖານ ທີ່ດຳຣົງຊີ ວິດທີ່ຖືກຊ່ວຍເຫລືອ,ເຮືອນດູ ແລຜູ້ເຖົ້າຫລືຄົນບໍ່ແຂງແຮງ,ແລະຜູ້ເບິ່ງ ແຍງການດຳຣົງຊີວິດທີ່ຖືກອູ້ມຊູຜູ້ທີ່ມີຄວາມຫຍຸ້ງຍາກນຳການສະແດງໃຫ້ເຫັນ ການປະຕິບັດຕາມກົດກຳນົດຕາມ ຣະບຽບການ.

**ພະແນກບໍຣິການປິ່ນປົວຢູ່ຕາມບ່ອນຢູ່ອາສັຍຈະຮັບຜິດຊອບສຳລັບການອອກໃບອະນຸຍາດແລະການກວດກາເບິ່ງສະຖານທີ່ປິ່ນປົວຣະຍະຍາວຂອງຣັດ ວໍຊິງຕັນ**

ອີເມລ:
RCSQIP@dshs.wa.gov

**RCS LTC QIP Program**
PO Box 45600
Olympia, WA 98504-5600

Washington State
Department of Social & Health Services
*Transforming lives*

DSHS 22-1878 LA (Rev. 10/22) Laotian

# ໂຄງການສົ່ງເສີມຄຸນນະພາບຂອງການ ປິ່ນປົວຣະຍະຍາວໃຫ້ດີຂື້ນ



ການບໍຣິການສົ່ງເສີມຄຸນນະພາບໃຫ້ດີ ຂຶ້ນສຳລັບເຮືອນຄອບຄົວຜູ້ໃຫຍ່,ສະຖານ ທີ່ດຳຣົງຊີວິດທີ່ຖືກຊ່ວຍເຫລືອ,ເຮືອນດູ ແລຜູ້ເຖົ້າຫລືຄົນບໍ່ແຂງແຮງ,ຜູ້ເບິ່ງ ແຍງການດຳຣົງຊີວິດທີ່ຖືກອູ້ມຊູ, ແລະ ການຢ້ຽມຢາມການສົ່ງເສີມຄຸນນະພາບ ໃຫ້ດີຂື້ນສຳລັບການກວດກາເບິ່ງໃນ ເບື້ອງຕົ້ນຢູ່ເຮືອນຄອບຄົວຜູ້ໃຫຍ່

ພະແນກການປິ່ນປົວຢູ່ຕາມບ່ອນ ຢູ່ອາສັຍ **(RCS)**

ພະແນກການປິ່ນປົວຢູ່ຕາມບ່ອນຢູ່ອາ ສັຍໄດ້ເຮັດໂຄງການສົ່ງເສີມ ຄຸນນະພາບ ຂອງການ ປິ່ນປົວຣະຍະຍາວໃຫ້ດີຂຶ້ນ (LTC QIP) ຂຶ້ນມາເປັນການຕອບສະນອງຕໍ່ຄໍາຮຽກຮ້ອງຈາກຊຸມນຸມ ຊົນແລະ ສະພາເພື່ອຈະອູ້ມຊູຜູ້ເບິ່ງແຍງດູແລໂດຍ ການໃຊ້ການເຂົ້າເບິ່ງການສົ່ງ ເສີມຄຸນ ນະພາບແບບບໍ່ແມ່ນການລົງ ໂທດ.



ການບໍຣິການແມ່ນຟຣີແລະຕາມສະ ມັກໃຈ.ຜູ້ບໍຣິການຈະຖືກສົ່ງຕໍ່ໄປຫາໂຄງການໂດຍຜ່ານ:

- ການກວດເບິ່ງປະວັດຂອງການປະຕິບັດ ຕາມຣະບຽບການຂອງ **RCS**
- ຄໍາແນະນໍາຂອງຜູ້ຈັດການທ້ອງຖິ່ນຂອງ **RCS**
- ຜູ້ເບິ່ງແຍງດູແລຍັງສາມາດຮ້ອງຂໍເອົາ ການສົ່ງຕໍ່ຈາກຜູ້ຈັດການທ້ອງຖິ່ນ

## ຈຸດເປົ້າຫມາຍຂອງ RCS LTC QIP:

ເອົາການສຶກສາໃຫ້ແບບຄວບຄຸມສະຖາ ນະການ,ການຊີ້ນໍາ ແລະການອູ້ມຊູໃຫ້ ເຮືອນຄອບຄົວຜູ້ໃຫຍ່,ສະຖານ ທີ່ດໍາຣົງ ຊີວິດທີ່ຖືກຊ່ວຍເຫລືອ,ເຮືອນດູ ແລຜູ້ເຖົ້າ ຫລືຄົນບໍ່ແຂງແຮງ,ແລະຜູ້ເບິ່ງ ແຍງການ ດໍາຣົງຊີວິດທີ່ຖືກອູ້ມຊູເພື່ອຈະ:

- ເຮັດໃຫ້ການເບິ່ງແຍງດູແລແລະຣະບົບ ການຈົດບັນທຶກເຂັ້ມແຂງຂຶ້ນ
- ສົ່ງເສີມການປະຕິບັດ ຕາມຣະບຽບການ ໃຫ້ດີຂຶ້ນ
- ຫລີກເວັ້ນອັນຕະຣາຍຕໍ່ຜູ້ໃຫຍ່ອ່ອນແອ

ຣະບຽບການຂອງ **RCS LTC QIP** ລວມ ເອົາການປະເມີນຜົນແລະຢຸດທະວິທີສໍາ ລັບການປ່ຽນແປງທາງການຈັດຕັ້ງ ແລະສ່ວນບຸກຄົນ

**A** ການຮັບຮູ້ໃນຄວາມຕ້ອງການສໍາລັບ ການປ່ຽນແປງ

**D** ຄວາມປະສົງເພື່ອຈະອູ້ມຊູການປ່ຽນແປງ

**K** ຄວາມຮູ້ວ່າຈະປ່ຽນແປງແນວໃດ

**A** ຄວາມສາມາດທີ່ຈະສະແດງຄວາມຊໍາ ນານແລະການປະພຶດອອກມາ

**R** ການເຮັດໃຫ້ເຂັ້ມແຂງຂຶ້ນເພື່ອຈະເຮັດ ໃຫ້ການປ່ຽນແປງຄົງຢູ່ຄືເກົ່າ

## ການບໍຣິການທີ່ຖືກເອົາໃຫ້ລວມເອົາ:

- ການຕີຣາຄາເບິ່ງຣະບົບການສົ່ງການ ເບິ່ງແຍງດູແລທີ່ກ່ຽວພັນນໍາມາດຕະ ຖານຊຸມນຸມຊົນ,ພາກປະຕິບັດອີງຕາມ ຫລັກຖານ,ແລະກົດກໍານົດຕາມກົດຣະ ບຽບສໍາລັບການຄວບຄຸມຢາ,ການລົ້ມ ແລະການຫລີກເວັ້ນແລະການຄວບຄຸມ ການອັກເສບ
- ການຊີ້ບອກເປົ້າຫມາຍຂອງຜູ້ບໍຣິການ
- ການສັງເກດເບິ່ງຢູ່ຕາມສະຖານທີ່ເບິ່ງ ການເບິ່ງແຍງແລະຣະບົບການສົ່ງ ການ ເບິ່ງແຍງດູແລ
- ການຊີ້ນໍາຜ່ານການເຮັດນໍາຢູ່ຕາມ ສະຖານທີ່ແລະທາງສື່ສານ
- ຫນັງສືສະລູບຄວາມຂອງການຄົ້ນພົບໃນ ການປັຽນຢາມ **LTC QIP**
- ຄວາມຊ່ວຍເຫລືອເພື່ອຈະຊ່ວຍຜູ້ເບິ່ງ ແຍງດູແລໃຫ້ຂຽນແຜນການກະທໍາ
- ແຫລ່ງຊ່ວຍເຫລືອແລະການສົ່ງຕໍ່ເພື່ອ ຈະອູ້ມຊູຜູ້ເບິ່ງແຍງດູແລໃນການສົ່ງ ເສີມໃຫ້ດີຂຶ້ນໃນການປິ່ນປົວແລະຣະບົບ ການສົ່ງການປິ່ນປົວໃຫ້.
- ການອູ້ມຊູທີ່ຕິດຕາມມາສໍາລັບການ ປ່ຽນແປງ
- ການປັຽນຢາມ ການ ສົ່ງເສີມຄຸນນະພາບ ໃຫ້ດີຂຶ້ນສໍາລັບ ການ ກວດກາເບິ່ງໃນ ເບື້ອງຕົ້ນຂອງ **AFH**

